Minnesota Department of Education

ຄຳຖາມ ແລະ ຄຳຕອບ ກ່ຽວກັບການຈົບການສຶກສາ
ເງື່ອນໄຂໃນການປະເມີນຜົນ

ເງື່ອນໄຂໃນການປະເມີນຜົນການຈົບການສຶກສາແມ່ນຫຍັງ?

ເພື່ອໃຫ້ມີສິດໄດ້ຮັບໃບຢັ້ງຢືນຈາກໂຮງຮຽນມັດທະຍົມຕອນປາຍຂອງຣັຖມິນນີໂຊຕາ, ນັກຮຽນທຸກຄົນຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ. ອີງຕາມການປັບປຸງ ຣັຖບັນຍັດມິນນີໂຊຕາ, ພາກທີ 120B.30, ເງື່ອນໄຂການປະເມີນຜົນການຈົບການສຶກສາມີການປ່ຽນແປງ. ມີຫຼາຍວິທີຕ່າງກັນ ໃນການປະຕິບັດໃຫ້ໄດ້ຕາມເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ ໂດຍອີງໃສ່ປີທີ່ນັກຮຽນລົງທະບຽນຄັ້ງທຳອິດໃນຊັ້ນຮຽນປີທີ 8. ພໍ່ແມ່/ຜູ້ປົກຄອງ ຄວນຈະຕິດຕໍ່ຫາໂຮງຮຽນຂອງນັກຮຽນຂອງພວກເຂົາ ເພື່ອຂໍຂໍ້ມູນເພີ່ມເຕີມ.

ມີການປ່ຽນແປງທາງດ້ານເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ, ລາຍລະອຽດ ແລະ ຂໍ້ມູນເພີ່ມເຕີມ ຈະສືບຕໍ່ໃສ່ໄວ້ໃນເວັບໄຊທ໌ຂອງ MDE ຕາມຄວາມຈຳເປັນ. ກະລຸນາເຂົ້າໄປເບິ່ງພາກສຳລັບພໍ່ແມ່ (Just for Parents) ຢູ່ໃນເວັບໄຊທ໌ຂອງ MDE ເພື່ອເບິ່ງຂໍ້ມູນທີ່ໄດ້ຮັບການປັບປຸງລ້າສຸດ. (ເຂົ້າໄປທີ່ Just for Parents > Testing Information.)

ມີວິທີໃດແດ່ທີ່ຈະສາມາດປະຕິບັດໃຫ້ໄດ້ຕາມ ເງື່ອນໄຂຂອງການປະເມີນຜົນການຈົບການສຶກສາຂອງຣັຖ?

ນັກຮຽນຊັ້ນຮຽນປີທີ 12 ແລະ ແກ່ກ່ວາ ໃນສົກສຶກສາ 2014–2015 (ໄດ້ລົງທະບຽນຄັ້ງທຳອິດໃນຊັ້ນຮຽນປີທີ 8 ໃນປີ 2010–2011 ຫຼື ກ່ອນໜ້ານັ້ນ)

ນັກຮຽນເຫຼົ່ານີ້ ສາມາດປະຕິບັດໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາໃນວິຊາ ທັດອ່ານ, ຄະນິດສາດ ແລະ ທັດຂຽນ ໂດຍສັງລວມສາມທາງເລືອກດັ່ງລຸ່ມນີ້ ຈົນກ່ວາຈະສາມາດປະຕິບັດໄດ້ຕາມເງື່ອນໄຂຂອງແຕ່ລະວິຊາ.

1. ປະຕິບັດໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ ໂດຍຜ່ານການປະເມີນຜົນການຈົບການສຶກສາ-ທີ່ຕ້ອງການ (Graduation-Required Assessments - GRAD) ໃນອົງປະກອບຂອງ ວິຊາທັດອ່ານ, ຄະນິດສາດ ແລະ ທັດຂຽນ, ຊຶ່ງລວມມີ:

    - ໄດ້ຮັບຄະແນນໃນລະດັບດີເລີດ. ຖ້າວ່ານັກຮຽນໄດ້ຄະແນນໃນລະດັບດີເລີດ (ບັນລຸ ຫຼື ສູງກ່ວາມາດຕະຖານ) ໃນການປະເມີນຜົນແບບຮອບດ້ານຂອງມິນນີໂຊຕາໃນວິຊາທັດອ່ານ (Reading Minnesota Comprehensive Assessment - MCA) ຊັ້ນຮຽນປີທີ 10 ແລະ/ຫຼື MCA ຂອງວິຊາຄະນິດສາດ ຂອງຊັ້ນຮຽນປີທີ 11, ໝາຍຄວາມວ່າ ພວກເຂົາປະຕິບັດໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາສຳລັບວິຊາເຫຼົ່ານັ້ນ.
        - ນີ້ຍັງໃຊ້ໄດ້ກັບນັກຮຽນທີ່ໄດ້ສອບເສັງແກ້ໄຂ MCA (MCA - Modified) ໃນຊັ້ນໂຮງຮຽນມັດທະຍົມຕອນປາຍ[1] ຫຼື ການສອບເສັງທັກສະດ້ານການສຶກສາຂອງມິນນີໂຊຕາ (Minnesota Test of Academic Skills - MTAS) ແທນ MCAs.

[1] 2013–2014 ແມ່ນປີສຸດທ້າຍຂອງການປະຕິບັດ ການປະເມີນຜົນແກ້ໄຂ MCA (MCA-Modified).

- ໄດ້ຮັບຄະແນນຜ່ານຢູ່ໃນອົງປະກອບຂອງວິຊາຫັດຂຽນ (Written Composition GRAD), ຫຼື ວິຊາຫັດອ່ານ ແລະ ການສອບເສັງຄືນວິຊາຄະນິດສາດຂອງ GRAD.
    - ການປະເມີນຜົນແບບເປັນທາງເລືອກຂອງມິນີໂຊຕາ: ວິຊາຫັດຂຽນ ສາມາດສຳເລັດສົມບູນໄດ້ສຳລັບນັກຮຽນທີ່ຕ້ອງການ ການປະເມີນຜົນແບບເປັນທາງເລືອກ ເພື່ອໃຫ້ໄດ້ຕາມເງື່ອນໄຂສຳລັບວິຊາຫັດຂຽນ.
- ປະຕິບັດໄດ້ຕາມວິທີທາງເລືອກຂອງ GRAD, ຊຶ່ງອາດຈະລວມມີ:
    - ໄດ້ຮັບຄະແນນຜ່ານຂອງແຕ່ລະຄົນ (ສຳລັບນັກຮຽນ IEP ຫຼື ແຜນ 504)
    - ໄດ້ຮັບການຍົກເວັ້ນສຳລັບນັກຮຽນພາສາອັງກິດ (EL)
    - ສອບເສັງຜ່ານການປະເມີນຜົນຄວາມໜ້າເຊື່ອຖືອີກອັນໜຶ່ງຂອງລັດ ທີ່ໄດ້ຮັບຮອງໂດຍ MDE (ເພິ່ງພາອາໃສ)
    - ປະຕິບັດໄດ້ຕາມເງື່ອນໄຂທີ່ເປັນທາງເລືອກຂອງວິຊາຄະນິດສາດ, ສຳລັບນັກຮຽນທີ່ໄດ້ລົງທະບຽນຄັ້ງທຳອິດໃນຊັ້ນຮຽນປີທີ 8 ຜ່ານສົກຮຽນ 2009-2010 ເທົ່ານັ້ນ (ອາດຈະເປັນຜູ້ທີ່ມີອາຍຸສູງກ່ວາຊັ້ນຮຽນປີທີ 12)

ຫຼື

2. ນັກຮຽນສາມາດສອບເສັງ ACT, WorkKeys, Compass, ຫຼື ການສອບເສັງແບບປາລະໄນເພື່ອເຂົ້າເປັນທະຫານ (Armed Services Vocational Aptitude Battery - ASVAB) ເພື່ອໃຫ້ໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ ໃນວິຊາຫັດອ່ານ, ຄະນິດສາດ, ແລະ/ຫຼື ຫັດຂຽນ.

ຫຼື

3. ໂຮງຮຽນປະຈຳເຂດອາດຈະກົດແທນຄະແນນຈາກຕົວເລືອກໃດໜຶ່ງ, ການປະເມີນຜົນທີ່ທຽບເທົ່າ ເພື່ອໃຫ້ໄດ້ຕາມເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ.

ນັກຮຽນຊັ້ນຮຽນປີທີ 11 ໃນສົກສຶກສາ 2014–2015 (ໄດ້ລົງທະບຽນຄັ້ງທຳອິດໃນຊັ້ນຮຽນປີທີ 8 ໃນປີ 2011–2012)

ນັກຮຽນເຫຼົ່ານີ້ຈະຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ ໂດຍຜ່ານການເຂົ້າຮ່ວມໃນຊັ້ນຮຽນປີທີ 11 ຂອງວິຊາຫັດຂຽນ ACT Plus (ACT Plus Writing) ຖ້າວ່າໄດ້ເຂົ້າຮ່ວມໃນຊ່ວງການບໍລິຫານຈັດການທົ່ວລັດຖໃນລະດູໃບໄມ້ປົ່ງປີ 2015.

ເຖິງຢ່າງໃດກໍ່ຕາມ, ຖ້າຫາກນັກຮຽນບໍ່ເຂົ້າຮ່ວມໃນວິຊາຫັດຂຽນ ACT Plus (ACT Plus Writing) ໃນຊັ້ນຮຽນປີທີ 11 ຂອງລະດູໃບໄມ້ປົ່ງປີ 2015, ນັກຮຽນສາມາດປະຕິບັດໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ ໃນວິຊາຫັດອ່ານ, ຄະນິດສາດ, ແລະ ຫັດຂຽນ ໂດຍລວມທັງສາມທາງເລືອກ ທີ່ໄດ້ລະບຸໄວ້ຂ້າງເທິງນັ້ນພາຍໃຕ້ "ນັກຮຽນຊັ້ນຮຽນປີທີ 12 ແລະ ອາຍຸແກ່ກ່ວາ ໃນສົກສຶກສາ 2014–2015." ຂຶ້ນກັບນັກຮຽນແຕ່ລະຄົນ ແລະ ຄອບຄົວຂອງພວກເຂົາຈະຕັດສິນວ່າການປະເມີນຜົນອັນໃດແມ່ນເໝາະສົມທີ່ສຸດ (ການປະຕິບັດທົ່ວລັດຖຂອງ ວິຊາຫັດຂຽນ ACT Plus ຫຼື ໜຶ່ງໃນບັນດາທາງເລືອກຕ່າງໆ).

ນັກຮຽນຊັ້ນຮຽນປີທີ 10 ແລະ ຜູ້ທີ່ໜຸ່ມກ່ວາໃນສົກສຶກສາ 2014–2015 (ໄດ້ລົງທະບຽນຄັ້ງທຳອິດໃນຊັ້ນຮຽນປີທີ 8 ໃນປີ 2012–2013 ແລະ ຫຼັງຈາກນັ້ນ)

ນັກຮຽນເຫຼົ່ານີ້ ຈະປະຕິບັດໃຫ້ໄດ້ຕາມເງື່ອນໄຂການປະເມີນຜົນການຈົບການສຶກສາ ໂດຍຜ່ານການເຂົ້າຮ່ວມໃນລຳດັບຂອງການປະເມີນຜົນທາງສາຂາອາຊີບ ແລະ ວິທະຍາໄລ, ຊຶ່ງຈະເລີ່ມປະຕິບັດຄັ້ງທຳອິດໃນສົກສຶກສາ 2014–2015:

- ການປະເມີນຜົນທາງດ້ານການປະກອບອາຊີບ ແລະ ວິທະຍາໄລ ຂອງຊັ້ນຮຽນປີທີ 8

ແລະ

- ການປະເມີນຜົນທາງດ້ານການປະກອບອາຊີບ ແລະ ວິທະຍາໄລ ຂອງຊັ້ນຮຽນປີທີ 10

ແລະ

- ເຂົ້າຮ່ວມໃນການປະຕິບັດທົ່ວຣັຖຂອງວິຊາຫັດຂຽນ ACT Plus (ACT Plus Writing) ຂອງຊັ້ນຮຽນປີທີ 11

ເຂດຕ້ອງໃຫ້ໂອກາດແກ່ນັກຮຽນທຸກຄົນເຂົ້າຮ່ວມໃນການປະເມີນຜົນທາງດ້ານສາຂາອາຊີບ ແລະ ວິທະຍາໄລ (Career and College Assessment). ເຖິງຢ່າງໃດກໍ່ຕາມ, ອາດຈະມີເຫດຜົນບາງຢ່າງທີ່ບອກว່າ ເປັນຫຍັງ ນັກຮຽນອາດຈະບໍ່ເຂົ້າຮ່ວມ. ນັກຮຽນເຫຼົ່ານີ້ຈະບໍ່ຖືກປະຕິເສດໃຫ້ໄດ້ຮັບໃບຢັ້ງຢືນການຈົບການສຶກສາ ຍ້ອນວ່າ ນັກຮຽນບໍ່ເຂົ້າຮ່ວມໃນການປະເມີນຜົນທາງດ້ານສາຂາອາຊີບ ແລະ ວິທະຍາໄລ (Career and College Assessment).

- ນັກຮຽນອາດຈະບໍ່ສາມາດເຂົ້າຮ່ວມໃນການປະເມີນຜົນ ຍ້ອນສະພາບການພິເສດ (ຕົວຢ່າງ: ນັກຮຽນ ຍ້າຍໄປຢູ່ມິນີໂຊຕາ ຫຼັງຈາກການປະຕິບັດການປະເມີນຜົນທາງດ້ານ ສາຂາອາຊີບ ແລະ ວິທະຍາໄລ)
- ພໍ່ແມ່/ຜູ້ປົກຄອງ ສາມາດຕັດສິນວ່າມັນບໍ່ເໝາະສົມສຳລັບນັກຮຽນແຕ່ລະຄົນທີ່ຈະເຂົ້າຮ່ວມ. ພໍ່ແມ່/ ຜູ້ປົກຄອງ ຕ້ອງຂຽນໜັງສືເປັນລາຍລັກອັກສອນໄປຫາໂຮງຮຽນເຂດ ເພື່ອບອກການຕັດສິນໃຈຂອງ ພວກເຂົາ.

ນັກຮຽນທີ່ເຂົ້າຮ່ວມໂປຣແກຣມການສຶກສາສ່ວນບຸກຄົນ (Individualized Education Program - IEP) ແລະ ຜູ້ທີ່ມີສິດສອບເສັງ ທັກສະການສຶກສາຂອງມິນີໂຊຕາ (Minnesota Test of Academic Skills - MTAS) ອາດຈະຕ້ອງເຂົ້າຮ່ວມທັງວິຊາຫັດອ່ານ MTAS ຂອງຊັ້ນຮຽນປີທີ 10 ຫຼື ວິຊາຄະນິດສາດ MTAS ຂອງຊັ້ນຮຽນປີທີ 11 (ຫຼື ເຂົ້າຮ່ວມການປະເມີນຜົນທັງສອງວິຊາ) ເພື່ອໃຫ້ໄດ້ຕາມເງື່ອນໄຂຂອງການປະເມີນຜົນການຈົບການສຶກສາ. ຂໍ້ມູນທີ່ເປັນຄວາມຈິງຂອງພໍ່ແມ່ສຳລັບ MTAS (MTAS Parent Fact Sheet) ແມ່ນມີໃຫ້ເບິ່ງຢູ່ເວັບໄຊທ໌ຂອງ MDE ເພື່ອຊອກຫາຂໍ້ມູນເພີ່ມເຕີມ. ເຂົ້າເບິ່ງ MTAS Parent Fact Sheet ຢູ່ເວັບໄຊທ໌ຂອງ MDE. (ເຂົ້າໄປທີ່ Just for Parents > Testing Information.)

ຕິດຕໍ່ຫາໂຮງຮຽນຂອງນັກຮຽນຂອງທ່ານ ຖ້າຢາກໄດ້ຂໍ້ມູນເພີ່ມເຕີມກ່ຽວກັບການປະຕິບັດໃຫ້ໄດ້ຕາມເງື່ອນໄຂຂອງ ການປະເມີນຜົນການຈົບການສຶກສາ.

ສຳລັບຂໍ້ມູນເພີ່ມເຕີມ, ຈົ່ງຕິດຕໍ່ຫາ:

Statewide Testing
mde.testing@state.mn.us

Minnesota Department of Education
1500 Highway 36 West
Roseville, MN 55113-4266
http://education.state.mn.us

ກຸມພາ 2015